# สิทธิหน้าที่ นายจ้าง ลูกจ้าง

## ສິດຫນ້າທີ່ນາຍຈ້າງແລະລູກຈ້າງ

ตามพระราชบัญญัติคุ้มครองแรงงาน
พ.ศ.2541

ຕາມພະຣາດຊະບັນຍັດຄຸ້ມຄອງແຮງງານ
ພ.ສ.2541



## ภาษาลาว

ສຳນັກຄຸ້ມຄອງແຮງງານ

ກົມສະຫວັດດີການແລະຄຸ້ມຄອງແຮງງານ

ກະຊວງແຮງງານ

http://www.labour.go.th

# สิทธิหน้าที่ นายจ้าง ลูกจ้าง



## 1. ເວລາເຮັດວຽກປົກກະຕິ

ວຽກທົ່ວໄປບໍ່ເກີນ 8 ຊົ່ວໂມງ/ວັນຫຼື ຕາມທີ່ນາຍຈ້າງຕົກລົງກັນ ແລະບໍ່ເກີນ 48ຊົ່ວໂມງ/ສັບປະດາ

ວຽກທີ່ອາດຈະເປັນອັນຕະລາຍ ຕໍ່ສຸຂະພາບ ແລະຄວາມປອດໄພຂອງລູກຈ້າງໄດ້ແກ່ວຽກທີ່ຕ້ອງເຮັດໃຕ້ດິນ ໃຕ້ນ້ຳ ໃນຖ້ຳ ໃນອຸໂມງຫຼືບ່ອນທີ່ບໍ່ມີອາກາດ ວຽກກ່ຽວກັບກຳມັນ ຕະພາບລັງສີ ວຽກຈອດໂລຫະ ວຽກຂົນສົ່ງວັດຖຸອັນຕະລາຍ ວຽກທີ່ເຮັດດ້ວຍເຄື່ອງມື ຫຼື ເຄື່ອງຈັກ ຊຶ່ງຜູ້ເຮັດໄດ້ຮັບການສັ່ນສະເທືອນອັນອາດເປັນອັນຕະລາຍ ແລະ ວຽກທີ່ຕ້ອງເຮັດ ກ່ຽວກັບຄວາມຮ້ອນຫຼາຍ ຫຼື ຄວາມເຢັນຫຼາຍທີ່ອາດເປັນອັນຕະລາຍ ໂດຍສະພາບຂອງ ວຽກທີ່ມີຄວາມສ່ຽງອັນຕະລາຍ ຫຼືມີພາວະແວດລ້ອມໃນການເຮັດວຽກເກີນ ມາດຕະຖານຄວາມປອດໄພທີ່ກຳນົດໄວ້ເຊິ່ງບໍ່ສາມາດແກ້ໄຂທີ່ແຫຼ່ງກຳເນີດໄດ້ ແລະຕ້ອງຈັດໃຫ້ມີການປ້ອງກັນທີ່ໂຕບຸກຄົນໃຫ້ມີເວລາເຮັດວຽກປົກກະຕິ ບໍ່ເກີນ 7 ຊົ່ວໂມງ/ມື້ແລະບໍ່ເກີນ 24 ຊົ່ວໂມງ/ສັບປະດາ

## 2. ເວລາພັກ

ລະຫວ່າງເຮັດວຽກປົກກະຕິ

ບໍ່ຫນ້ອຍກວ່າ 1 ຊົ່ວໂມງ/ມື້ຫລັງຈາກລູກຈ້າງເຮັດວຽກມາແລ້ວບໍ່ເກີນ 5 ຊົ່ວໂມງ ຕິດຕໍ່ກັນຫຼືອາດຕົກລົງກັນເປັນໄລໄຍກໍ່ໄດ້ ແຕ່ລວມແລ້ວຕ້ອງບໍ່ໜ້ອຍກວ່າ 1ຊົ່ວໂມງ/ມື້

ວຽກໃນຮ້ານອາຫານ ຫຼືຮ້ານເຄື່ອງດື່ມ ຊຶ່ງເປີດຈຳຫນ່າຍຫຼືໃຫ້ບໍລິການໃນແຕ່ລະວັນບໍ່ຕິດ ຕໍ່ກັນ ອາດພັກເກີນ 2ຊົ່ວໂມງ/ມື້ກໍ່ໄດ້

ນາຍຈ້າງອາດບໍ່ຈັດເວລາພັກໄດ້ ກໍລະນີເປັນວຽກທີ່ມີລັກສະນະ ຫຼືສະພາບຂອງວຽກຕ້ອງເຮັດຕິດຕໍ່ກັນໄປ ໂດຍໄດ້ຮັບການຍິນຍອມ ຈາກລູກຈ້າງຫຼືເປັນວຽກດ່ວນ

ກ່ອນເຮັດວຽກລ່ວງເວລາ ກໍລະນີໃຫ້ລູກຈ້າງເຮັດວຽກລ່ວງເວລາຕໍ່ຈາກເວລາເຮັດວຽກປົກກະຕິ ບໍ່ໜ້ອຍກວ່າ 2 ຊົ່ວໂມງ ຕ້ອງໃຫ້ລູກຈ້າງພັກກ່ອນເລີ່ມເຮັດວຽກລ່ວງເວລາ ບໍ່ໜ້ອຍກວ່າ 20 ນາທີ